**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກົມສ່ວຍສາອາກອນ

ສ່ວຍສາອາກອນປະຈຳແຂວງ

ເລກທີ 1594 /ສອຂ

ແຂວງຈຳປາສັກ, ວັນທີ 07/07/2026

# ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

ເຖິງ: ບຸກຄົນ, ນິຕິບຸຄົນ ບໍລິສັດ ຜູ້ຮັບເໝົາກໍ່ສ້າງ ທີ່ທີ່ມີຄວາມສົນໃຈ ເຂົ້າຮ່ວມທາບທາມສົມທຽບລາຄາ ໂຄງການກໍ່ສ້າງຫ້ອງການສ່ວຍສາອາກອນປະຈຳແຂວງຈຳປາສັກ ປະຈຳປີ 2026.

1. ເຈົ້າຂອງໂຄງການ **ສ່ວຍສາອາກອນປະຈຳແຂວງ** ໄດ້ຮັບອະນຸມັດງົບປະມານແຫ່ງລັດປະຈຳສົກ ປີ **2025** ເພື່ອດຳເນີນການໂຄງການ ກໍ່ສ້າງຫ້ອງການສ່ວຍສາອາກອນປະຈຳແຂວງຈຳປາສັກ ປະຈຳປີ 2026 ດ້ວຍການປະມູນແບບສົມທຽບຫົວໜ່ວຍລາຄາ.
2. ເຈົ້າຂອງໂຄງການ **ສ່ວຍສາອາກອນປະຈຳແຂວງຈຳປາສັກ** ຂໍເຊີນບໍລິສັດຂອງທ່ານ ເຂົ້າຍື່ນຊອງປະມູນແບບສົມທຽບຫົວໜ່ວຍລາຄາສຳລັບ ໂຄງການ ກໍ່ສ້າງຫ້ອງການສ່ວຍສາອາກອນປະຈຳແຂວງຈຳປາສັກ ປະຈຳປີ 2026.
3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນແບບສົມທຽບຫົວໜ່ວຍລາຄາທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍງົບປະມານຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019,
4. ຊອງປະມູນຕ້ອງສົ່ງກ່ອນເວລາ ***13:00ໂມງ ແລະ ວັນທີ 17 ສິງຫາ 2026*** ທີ່ ຫ້ອງການສ່ວຍສາອາກອນປະຈຳແຂວງ ແລະ ຊອງປະມູນສົມທຽບຫົວໜ່ວຍລາຄາທຸກໆຊອງຈະໄດ້ເປີດໃນເວລາ 14:00 ໂມງ ແລະ ວັນທີ ***17 ສິງຫາ 2026*** ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈຕ້ອງການເຂົ້າຮ່ວມ.

**(ລາຍລະອຽດຄຳແນະນຳໄດ້ຄັດຕິດມາພ້ອມນີ້)**

**ຫົວໜ້າສ່ວຍສາອາກອນ**

ກົມສ່ວຍສາອາກອນ ສ່ວຍສາອາກອນ ປະຈຳແຂວງ ແຂວງຈຳປາສັກ

ປອ ອຸ່ນຄຳ ກອງຈຳປາ

## ຄຳແນະນຳສຳລັບຜູ້ສະໜອງບໍລິການວຽກງານ

1. **ລາຍການຂອງສິນຄ້າ:** ຜູ້ຈັດຊື້-ຈັດຈ້າງ ແຈ້ງເຊີນໃຫ້ເຂົ້າຮ່ວມການປະມູນເພື່ອດຳເນີນການປະມູນຈັດຊື້-ຈັດຈ້າງ ການໂຄງການກໍ່ສ້າງຫ້ອງການສ່ວຍສາອາກອນປະຈຳແຂວງຈຳປາສັກ ປະຈຳປີ 2026 ດ້ວຍການສະເໜີໃຫ້ຍື່ນຊອງປະມູນສົມທຽບລາຄາ. ຜູ້ສະໜອງສິນຄ້າ ຫຼື ຜູ້ບໍລິການວຽກງານ ພາຍໃນກຳນົດເວລາ ຕາມທີ່ໄດ້ລະບຸໄວ້ຢູ່ໃນຂໍ້ທີ 6.
2. **ຄວາມເໝາະສົມຂອງຜູ້ສະໜອງສິນຄ້າ ຫລື ຜູ້ບໍລິການວຽກງານ:** ຜູ້ສະໜອງສິນຄ້າ ຫລື ຜູ້ບໍລິການວຽກງານຕ້ອງໄດ້ສະໜອງຂໍ້ມູນທີ່ກຳນົດໄວ້ຢູ່ໃນ ກ່ຽວກັບຂໍ້ມູນຜູ້ສະໜອງສິນຄ້າຫລື ຜູ້ບໍລິການວຽກງານ.
3. **ເອກະສານການສະເໜີເອກະສານສົມທຽບລາຄາ ປະກອບມີດັ່ງນີ້ :**
   - ໝວດທີ 1: ຂໍ້ມູນກ່ຽວກັບຜູ້ສະໜອງການບໍລິການສ້ອມແປງ.
   - ໝວດທີ 2: ແບບຟອມຍື່ນປະມູນສົມທຽບລາຄາ.
   - ໝວດທີ 3: ຕາຕະລາງລາຍການສິນຄ້າຫລື ການບໍລິການວຽກງານ ແລະ ການສະເໜີລາຄາ.
4. **ເອກະສານສະເໜີລາຄາຈາກຜູ້ສະໜອງສິນຄ້າ ຫລື ຜູ້ບໍລິການວຽກງານ:** ຜູ້ສະໜອງສິນຄ້າ ຫລື ຜູ້ບໍລິການວຽກງານ ຕ້ອງປະກອບເອກະສານປະມູນສົມທຽບລາຄາຊຶ່ງຕ້ອງປະກອບດ້ວຍ ເອກະສານດັ່ງນີ້:
   - (ກ). ຟອມປະມູນສົມທຽບລາຄາ (ໃບສະເໜີລາຄາ);
   - (ຂ). ຕາຕະລາງລາຍການສິນຄ້າ ແລະ ການສະເໜີລາຄາ;
   - (ຄ). ມາດຕະຖານເຕັກນິກຂອງສິນຄ້າທີ່ຈະສະໜອງໃຫ້ (ຖ້າມີ);
   - (ງ). ຂໍ້ມູນກ່ຽວກັບຜູ້ສະໜອງສິນຄ້າ ຫລື ຜູ້ບໍລິການວຽກງານ;
   - (ຈ). ຕາຕະລາງລາຍການສິນຄ້າຫລື ການບໍລິການວຽກງານ.
5. **ມາດຕະຖານໃນການສົມທຽບ ແລະ ການປະເມີນ:** ຜູ້ສະໜອງສິນຄ້າ ຫລື ຜູ້ບໍລິການວຽກງານຕ້ອງສະໜອງສິນຄ້າ ຫລື ການບໍລິການວຽກງານໃຫ້ຄົບຖ້ວນທຸກໆລາຍການທີ່ຕ້ອງການຕາມທີ່ລະບຸໄວ້
   - ເອກະສານທີ່ປະກອບມາບໍ່ຄົບຖ້ວນສົມບູນຫລື
   - ມາດຕະຖານເຕັກນິກທີ່ສະເໜີມາບໍ່ຖືກຕ້ອງກັບມາດຕະຖານເຕັກນິກທີ່ຕ້ອງການ.

   ການຮັບຮອງເອົາເປັນຜູ້ຊະນະການປະມູນຕ້ອງແມ່ນຜູ້ທີ່ສະເໜີລາຄາທີ່ໄດ້ປະເມີນວ່າແມ່ນລາຄາຕໍ່າ ຫຼື ລາຄາທີ່ດີທີ່ສຸດ.
6. **ອາຍຸເອກະສານປະມູນສົມທຽບລາຄາ:** ລາຄາທີ່ສະເໜີມາຕ້ອງມີຜົນໃຊ້ໄດ້, ຫຼັງຈາກວັນປິດຮັບຊອງປະມູນສົມທຽບລາຄາຕາມທີ່ລະບຸໄວ້ຢູ່ໃນຂໍ້ທີ 14 ຂອງຄຳແນະນຳ ສຳລັບຜູ້ສະໜອງສິນຄ້າ ຫລື ຜູ້ບໍລິການວຽກງານ.
8. **ການຍື່ນຊອງປະມູນສົມທຽບລາຄາ:** ຜູ້ປະມູນໜຶ່ງສາມາດຍື່ນຊອງປະມູນສົມທຽບລາຄາໄດ້ພຽງແຕ່ຊອງດຽວເທົ່ານັ້ນ.
9. **ສະກຸນເງິນໃນການສົມທຽບ:** ລາຄາລວມທັງໝົດຈະສົມທຽບເປັນເງິນກີບ.
10. **ລາຄາ:** ລາຄາທີ່ສະເໜີຕ້ອງລວມເອົາອາກອນທັງໝົດ ລວມທັງອາກອນກຳໄລ, ພາສີ, ການຂົນສົ່ງ, ການປະກັນໄພ ແລະ ລາຍຈ່າຍອື່ນໆທີ່ອາດຈະເກີດຂຶ້ນໃນການສົ່ງມອບສິນຄ້າຮອດສະຖານທີ່ສົ່ງມອບ. ລາຄາທີ່ສະເໜີນີ້ຕ້ອງບໍ່ມີການປ່ຽນແປງໃດໆໃນຕະຫລອດໄລຍະຂອງການຈັດຕັ້ງປະຕິບັດສັນຍາສະບັບນີ້.
11. **ສະຖານທີ່ ແລະ ມື້ສຸດທ້າຍໃນການຍື່ນຊອງປະມູນສົມທຽບລາຄາ:** ຊອງປະມູນສົມທຽບລາຄາຕ້ອງຍື່ນຊ້າສຸດບໍ່ໃຫ້ເກີນເວລາທີ່ກຳນົດໄວ້ ທີ່ **ຫ້ອງການສ່ວຍສາອາກອນປະຈຳແຂວງ.** ຊອງປະມູນສົມທຽບລາຄາໃດທີ່ໄດ້ຮັບພາຍຫລັງ

ເວລາທີ່ກຳນົດເປັນເວລາປິດຮັບຊອງນັ້ນຈະຖືວ່າເປັນການສົ່ງຊອງຊ້າ ແລະ ຊອງປະມູນດັ່ງກ່າວນັ້ນຈະຖືກປະຕິເສດ ແລະ ສົ່ງຄືນໃຫ້ເຈົ້າຂອງໂດຍບໍ່ໄດ້ມີການເປີດຊອງ.

12. ໜັງສືຄ້ຳປະກັນການປະມູນດ້ວຍກຽດ [ສຳລັບສັນຍາທີ່ນຳໃຊ້ງົບປະມານຂອງລັດ] - ຜູ້ປະມູນຕ້ອງສະເໜີ ການປະມູນ/ໜັງສືຄ້ຳປະກັນການປະມູນດ້ວຍກຽດໂດຍນຳໃຊ້ແບບຟອມໃນ ໝວດທີ 2. ອີງຕາມໜັງສືຄ້ຳປະກັນການປະມູນດ້ວຍກຽດ, ຜູ້ປະມູນທີ່ຖອນ ຫຼື ດັດແປງລາຄາຂອງຕົນໃນໄລຍະເວລາທີ່ການປະມູນຍັງມີຜົນໃຊ້ໄດ້, ຫຼື ປະຕິເສດ ເຊັນສັນຍາໂດຍສອດຄ່ອງກັບການສະເໜີລາຄາໃນຂະນະທີ່ໃບສະເໜີລາຄາຍັງມີຜົນໃຊ້ໄດ້, ຈະຖືກຫ້າມບໍ່ເຂົ້າຮ່ວມການປະມູນ/ການສະເໜີລາຄາເປັນເວລາສອງ (2) ປີຕາມທີ່ໄດ້ ກຳນົດໄວ້ໃນໜັງສືການຄ້ຳປະກັນການປະມູນດ້ວຍກຽດ.

13. **ການປ່ຽນແປງຫລືການຖອນຊອງປະມູນສົມທຽບລາຄາ:** ພາຍຫລັງທີ່ໄດ້ຍື່ນຊອງປະມູນແລ້ວນັ້ນ, ກ່ອນຮອດເວ ລາປິດຮັບຊອງປະມູນສົມທຽບລາຄາ, ຜູ້ປະມູນອາດສາມາດຖອນຊອງປະມູນສົມທຽບລາຄາຂອງຕົນໄດ້ໂດຍຕ້ອງໄດ້ສະເໜີເປັນລາຍລັກອັກສອນຫາຜູ້ຈັດຊື້-ຈັດຈ້າງ. ພາຍຫລັງເວລາປິດຮັບຊອງປະມູນສົມທຽບລາຄາທີ່ໄດ້ກຳນົດໄວ້ຢູ່ໃນຄຳແນະນຳສຳລັບຜູ້ປະມູນຂໍ້ທີ 14. ການຖອນຊອງປະມູນສົມທຽບລາຄາພາຍຫລັງເວລາປິດຮັບຊອງແລ້ວນັ້ນ ແລະ ໃນໄລຍະເວລາທີ່ອາຍຸການຂອງການປະມູນຍັງມີຜົນໃຊ້ໄດ້ຢູ່ນັ້ນ, ຈະຖືວ່າຜູ້ປະມູນນັ້ນເປັນຜູ້ທີ່ບໍ່ມີຄວາມເໝາະສົມ ແລະ ຈະບໍ່ສາມາດເຂົ້າປະມູນໃນຕໍ່ໜ້າອີກ.

14. **ການເປີດຊອງປະມູນສົມທຽບລາຄາ:** ຊອງປະມູນສົມທຽບລາຄາຈະເປີດໃນ **ວັນທີ 17 ສິງຫາ 2026, ເວລາ 14 : 00 ໂມງ** ແລະ ສະຖານທີ່ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຜູ້ຕາງໜ້າຂອງຜູ້ທີ່ຍື່ນຊອງປະມູນສົມທຽບລາຄາທີ່ສົນໃຈຢາກເຂົ້າຮ່ວມ. ການປະກາດໃນເວລາເປີດຊອງປະມູນສົມທຽບລາຄາແມ່ນໃຫ້ອ່ານຊື່ຂອງຜູ້ປະມູນ, ມີການຖອນຫລືປ່ຽນແປງ, ລາຄາປະມູນ, ການຫລຸດລາຄາ. ຜູ້ຈັດຊື້-ຈັດຈ້າງຕ້ອງໄດ້ແຈກຢາຍບົດບັນທຶກການເປີດຊອງປະມູນສົມທຽບລາຄາໃຫ້ແກ່ຜູ້ເຂົ້າຮ່ວມທຸກໆຄົນ. ໃນເວລາເປີດຊອງປະມູນສົມທຽບລາຄາຫ້າມບໍ່ໃຫ້ມີການປະຕິເສດຊອງປະມູນສົມທຽບລາຄາ, ເວັ້ນເສຍແຕ່ຊອງປະມູນສົມທຽບລາຄາໃດທີ່ສົ່ງຊ້າເທົ່ານັ້ນ.

## ໝວດທີ 1: ຂໍ້ມູນກ່ຽວກັບຜູ້ສະໜອງສິນຄ້າ ຫລື ຜູ້ບໍລິການວຽກງານ

ຜູ້ສະໜອງສິນຄ້າ ຫລື ຜູ້ບໍລິການວຽກງານຕ້ອງປະກອບບັນດາເອກະສານດັ່ງລຸ່ມນີ້:

1. ຊື່ທີ່ຖືກຕ້ອງຕາມກົດໝາຍຂອງຜູ້ປະມູນ
2. ສຳເນົາໃບທະບຽນວິສາຫະກິດ
3. ໜັງສືຢັ້ງຢືນການຊຳລະອາກອນ
4. ແບບຟອມຍື່ນສົມທຽບລາຄາ
5. ແບບຟອມແຈ້ງການຄ້ຳປະກັນການປະມູນດ້ວຍກຽດ